ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກົມກວດກາປ່າໄມ້

ເລກທີ 0280/ກກປມ

ນະຄອນຫຼວງວຽງຈັນ,ວັນທີ 20 AUG 2008

# ຄຳແນະນຳ

## ຂອງຫົວໜ້າກົມກວດກາປ່າໄມ້

## ກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ຄ້ອນກາ "ປມລ" ເປັນຄ້ອນຕີກາຍຶດ ຫລື ອາຍັດໄມ້ ທີ່ຜິດລະບຽບກົດໝາຍ ກ່ຽວກັບປ່າໄມ້

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24/12/2007.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບ ເລກທີ 0340/ກປ, ລົງວັນທີ 05/03/2008 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມກວດກາປ່າໄມ້.
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບ ເລກທີ 0074/ກປ, ລົງວັນທີ 05/08/2008 ວ່າດ້ວຍການມອບ ຄ້ອນຕີກາໄມ້ "ປມລ" ໃຫ້ກົມກວດກາປ່າໄມ້ ຄຸ້ມຄອງ ແລະ ນຳໃຊ້ຊົ່ວຄາວ.

ຜ່ານມາຄ້ອນກາ "ປມລ" ໄດ້ນຳໃຊ້ເພື່ອຕີກາໄມ້ທ່ອນ, ໄມ້ແປຮູບ, ປູດໄມ້ ແລະ ຕໍໄມ້ ອອກຕ່າງປະເທດ ຕາມຂໍ້ຕົກລົງຊົ່ວຄາວຂອງລັດຖະມົນຕີ ວ່າການ ກະຊວງກະສິກຳ ແລະ ປ່າໄມ້ ສະບັບ ເລກທີ 0356/ກປ, ລົງວັນທີ 06/04/1996 ກ່ຽວກັບ ການນຳໃຊ້ຄ້ອນຕີກາໄມ້, ແຕ່ປະຈຸບັນ ລັດຖະບານຍັງຮັກສາຫລັກການ ຫ້າມສົ່ງໄມ້ທ່ອນ ແລະ ໄມ້ແປຮູບອອກຕ່າງປະເທດ ຍົກເວັ້ນກໍລະນີຈຳເປັນ, ຈຶ່ງເຮັດໃຫ້ ການສົ່ງອອກໄມ້ດັ່ງກ່າວ ຫລຸດໜ້ອຍ ຖອຍລົງເວົ້າລວມ, ເວົ້າສະເພາະ ຫລາຍແຂວງ ໄດ້ຢຸດຕິຢ່າງສິ້ນເຊີງ ແລະ ເນື່ອງຈາກວ່າ ມີຄະດີ ກ່ຽວກັບ ການລັກລອບຕັດໄມ້ ແລະ ເຄື່ອນຍ້າຍໄມ້ຜິດກົດໝາຍເກີດຂຶ້ນຢູ່ຫລາຍທ້ອງຖິ່ນ. ສະນັ້ນ, ຈຶ່ງໄດ້ ໝູນໃຊ້ຄ້ອນກາ ປມລ ຈຳນວນໜຶ່ງ ເພື່ອຕີກາຍຶດ, ອາຍັດ ຫລື ປ່ອຍໄມ້ດັ່ງກ່າວ.

## ຫົວໜ້າກົມກວດກາປ່າໄມ້ ອອກຄຳແນະນຳດັ່ງນີ້:

**ມາດຕາ 1. ລັກສະນະຂອງຄ້ອນກາ "ປມລ".**

ຄ້ອນກາ "ປມລ" ມີລັກສະນະວົງມົນ ມີຕົວໜັງສື "ປມລ" ຢູ່ເຄິ່ງກາງ, ເລກລະຫັດເບີຄ້ອນກາ ຢູ່ເບື້ອງເທິງ ແລະ ຮູບດາວຫ້າລ່ຽມ ຢູ່ເບື້ອງລຸ່ມ ໃຊ້ຕີກາຢຶດໄມ້ທ່ອນ, ໄມ້ແປຮູບ, ປູດໄມ້ ແລະ ຕໍໄມ້ ທີ່ຜິດລະບຽບກົດໝາຍ ກ່ຽວກັບປ່າໄມ້.



ຮູບລັກສະນະຂອງຄ້ອນກາ




ຮູບຄ້ອນກາ "ປມລ"

**ມາດຕາ 2 . ຫຼັກການໃນການຕີກາຢຶດ, ອາຍັດ ຫລື ປ່ອຍໄມ້.**

ຄ້ອນກາ "ປມລ" ແມ່ນຄ້ອນກາປະທັບໜຶ່ງ ທີ່ມີຄວາມໝາຍສຳຄັນທາງດ້ານກົດໝາຍ ແລະ ມີຫລັກການຕົ້ນຕໍ ໃນການນຳໃຊ້ດັ່ງນີ້:

1. ຕີກາຄີກ: 1,3,5 . . . ແມ່ນໄມ້ຢຶດ ທີ່ຜິດລະບຽບກົດໝາຍກ່ຽວກັບປ່າໄມ້ ແລະ ບໍ່ໃຫ້ ເຄື່ອນຍ້າຍໄປທາງໃດຢ່າງເດັດຂາດ.
2. ຕີກາຄູ່: 2,4,6. . .ແມ່ນໄມ້ຕີກາປ່ອຍ ໂດຍໄດ້ຜ່ານການດຳເນີນຄະດີຢ່າງຖືກຕ້ອງ ຕາມກົດໝາຍ ແລະ ມີສິດ ເຄື່ອນຍ້າຍເຂົ້າສູ່ການຜະລິດ, ເຄື່ອນຍ້າຍຢູ່ພາຍໃນ ຫລື ສົ່ງອອກຕ່າງປະເທດໄດ້.

**ມາດຕາ 3. ກົມ, ກອງ ທີ່ຄຸ້ມຄອງ ແລະ ນຳໃຊ້ຄ້ອນກາ "ປມລ" ຊົ່ວຄາວ.**

1. ກົມກວດກາປ່າໄມ້ເປັນຜູ້ ຄຸ້ມຄອງ ແລະ ນຳໃຊ້ ຄ້ອນກາ ປມລ ເປັນຄ້ອນກາຢຶດ ແຕ່ພຽງຜູ້ດຽວຄື:

| ລ/ດ | ຊື່ແຂວງ | ນຳເບີຄ້ອນຕີກາ "ປມລ" | ໝາຍເຫດ |
|---|---|---|---|
| 1. | ແຂວງຜົ້ງສາລີ | 02 | |
| 2. | ແຂວງຫລວງນ້ຳທາ | 15 | |
| 3. | ແຂວງອຸດົມໄຊ | 24 | |
| 4. | ແຂວງບໍ່ແກ້ວ | 27 | |
| 5. | ແຂວງຫລວງພະບາງ | 30 | |
| 6. | ແຂວງໄຊຍະບູລີ | 33 | |
| 7. | ແຂວງຫົວພັນ | 34 | |

| | | | |
|---|---|---|---|
| 8. | ແຂວງຊຽງຂວາງ | 47 | |
| 9. | ແຂວງວຽງຈັນ | 49 | |
| 10. | ນະຄອນຫລວງ | 52 | |
| 11. | ແຂວງບໍລິຄຳໄຊ | 54 | |
| 12. | ແຂວງຄຳມ່ວນ | 40 | |
| 13. | ແຂວງສະຫວັນນະເຂດ | 43 | |
| 14. | ແຂວງຈຳປາສັກ | 57 | |
| 15 | ແຂວງສາລະວັນ | 56 | |
| 16. | ແຂວງເຊກອງ | 58 | |
| 17. | ແຂວງອັດຕະປື | 59 | |
| 18. | ກົມກວດກາປ່າໄມ້ | 55 | |

ໂດຍມອບໃຫ້ກອງກວດປ່າໄມ້ ປະຈຳແຂວງ ແລະ ນະຄອນຫລວງ ຄຸ້ມຄອງ ແລະ ນຳໃຊ້ເຂົ້າໃນ ວຽກງານການຍຶດໄມ້ທ່ອນ, ໄມ້ແປຮູບ, ປູດໄມ້ ແລະ ຕໍໄມ້ ທີ່ຜິດລະບຽບກົດໝາຍ ກ່ຽວກັບປ່າໄມ້ ໃນຂອບເຂດ ຄວາມຮັບຜິດຊອບຂອງຕົນ. ຄ້ອນກາ "ປມລ" ມອບໃຫ້ກອງກວດກາປ່າໄມ້ປະຈຳແຂວງໃດ ແມ່ນມີສິດນຳໃຊ້ສະເພາະ ແຕ່ແຂວງນັ້ນ ໂດຍບໍ່ອະນຸຍາດໃຫ້ໄປນຳໃຊ້ຢູ່ແຂວງອື່ນ ຢ່າງເດັດຂາດ.

2. ກອງກວດກາປ່າໄມ້ປະຈຳແຂວງ ແລະ ນະຄອນຫລວງ ຕ້ອງຄຸ້ມຄອງ ຄ້ອນກາໃຫ້ດີ ເກັບມ້ຽນໄວ້ບ່ອນທີ່ປອດໄພ, ຜູ້ທີ່ຄຸ້ມຄອງຄ້ອນກາ ຕ້ອງມີປື້ມບັນທຶກຄັກແນ່. ແຕ່ລະຄັ້ງກ່ອນຈະນຳໃຊ້ຄ້ອນກາ ອອກເຮັດວຽກ ຕ້ອງເຊັນມອບ ລະຫວ່າງຜູ້ທີ່ຖືກແຕ່ງຕັ້ງໄປເຮັດວຽກ ກັບຜູ້ຄຸ້ມຄອງຄ້ອນກາ ເຊັນບັນທຶກວັນ,ເດືອນ,ປີ ໄປເຮັດວຽກ, ເບີຄ້ອນ ,ສະຖານທີ່ ຫຼື ສະໜາມ , ຈຳນວນທ່ອນ, ຈຳນວນປູດ, ຈຳນວນຕໍ, ຈຳນວນໂຕ ຫຼື ມັດ ແລະ ບໍລິມາດ ພ້ອມທັງກຳນົດເວລາສົ່ງລະອຽດ.

**ມາດຕາ 4. ການນຳໃຊ້ຄ້ອນກາອອກໄປຕີກາຍຶດ, ອາຍັດ ຫລື ປ່ອຍໄມ້.**

ເຈົ້າໜ້າທີ່ປ່າໄມ້ ທີ່ຖືກມອບໝາຍໃຫ້ ນຳເອົາຄ້ອນກາອອກໄປຕີກາຍຶດ, ອາຍັດ ຫລື ປ່ອຍໄມ້ ຕ້ອງປະຕິບັດດັ່ງນີ້:

1. ຕີກາຍຶດ, ອາຍັດ ຫລື ປ່ອຍໄມ້ຕາມລະບຽບຫລັກການ ທີ່ກຳນົດໄວ້ໃນມາດຕາ 2 ຂອງຄຳແນະນຳສະບັບນີ້.
2. ເອົາໃຈໃສ່ປົກປັກຮັກສາຄ້ອນກາ ໂດຍ ບໍ່ໃຫ້ຕົກເຮ່ຍເສັຍຫາຍ, ບໍ່ໃຫ້ຄົນຢືມ ແລະ ບໍ່ໃຫ້ ຄົນອື່ນຕີກາແທນຢ່າງເດັດຂາດ.
3. ຫຼັງຈາກສຳເລັດ ການຕີກາຍຶດ, ອາຍັດ ຫລື ປ່ອຍໄມ້ແລ້ວ ຕ້ອງນຳເອົາຄ້ອນກາ ສົ່ງຄືນຕາມກຳນົດເວລາ ໂດຍມີການເຊັນບັນທຶກ ສົ່ງຢ່າງຄັກແນ່.
4. ການນຳໃຊ້ຄ້ອນກາ ໂດຍບໍ່ຖືກຕ້ອງ ຈະໄດ້ດຳເນີນຄະດີອາຍາ ຕາມມາດຕາ 127 ຂອງກົດໝາຍວ່າດ້ວຍປ່າໄມ້.

**ມາດຕາ 5. ຂໍ້ຫ້າມ.**

1. ຫ້າມຜູ້ທີ່ຄຸ້ມຄອງຄ້ອນກາ ມອບຄ້ອນກາໃຫ້ບຸກຄົນອື່ນ ທີ່ບໍ່ແມ່ນເຈົ້າໜ້າທີ່ປ່າໄມ້ ທີ່ຖືກແຕ່ງຕັ້ງໄປປະຕິບັດວຽກງານໃນເວລານັ້ນ ຫລື ຜູ້ບໍ່ມີໜ້າທີ່ຮັບຜິດຊອບກ່ຽວຂ້ອງ ຢ່າງເດັດຂາດ.
2. ຫ້າມເຈົ້າໜ້າທີ່ປ່າໄມ້ເອົາຄ້ອນກາ ອອກໄປນຳໃຊ້ໂດຍບໍ່ໄດ້ຮັບອະນຸຍາດ ຢ່າງເດັດຂາດ.
3. ຫ້າມປະຄ້ອນກາໄວ້ເຮືອນ ຫຼື ຖືເຂົ້າໄປສະຖານທີ່ຕ່າງໆ ຫຼັງສຳເລັດວຽກງານແລ້ວ.
4. ຫ້າມນຳໃຊ້ຄ້ອນກາ ເຂົ້າໃນວຽກງານອື່ນ ນອກຈາກການຕີກາຢຶດ, ອາຍັດ ຫລື ປ່ອຍໄມ້.
5. ຫ້າມມີ ພຶດຕິກຳອື່ນ ທີ່ເປັນຂໍ້ຫ້າມ ຕາມທີ່ກຳນົດໄວ້ໃນລະບຽບກົດໝາຍ.

**ມາກຕາ 6. ການຈັດຕັ້ງປະຕິບັດ.**

ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້, ກອງກວດກາປ່າໄມ້, ຂະແໜງປ່າໄມ້ແຂວງ ແລະ ນະຄອນຫລວງ, ທຸກໜ່ວຍທຸລະກິດໄມ້ຂອງລັດ, ເອກະຊົນ, ບຸກຄົນ, ນິຕິບຸກຄົນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ຢ່າງມີປະສິດທິຜົນສູງ.

**ມາດຕາ 7. ຜົນສັກສິດ.**

ຄຳແນະນຳ ສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຮອງຫົວໜ້າ ກົມກວດກາປ່າໄມ້

**ອາຍສະໝອນ ບົ່ນບະລັງສີ**